ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283



# ທຫລ ເຜີຍແຜ່ດຳລັດວ່າດ້ວຍລົດຂອງລັດ




ໃນຕອນເຊົ້າຂອງວັນທີ 9 ມິຖຸນາ 2022 ທະນາຄານແຫ່ງ ສປປ ລາວ (ທຫລ) ໄດ້ຈັດກອງປະຊຸມເຜີຍແຜ່ດຳລັດວ່າດ້ວຍລົດຂອງລັດ ສະບັບເລກທີ 599/ລບ, ລົງວັນທີ 29 ກັນຍາ 2021 ແລະ ນິຕິກຳອື່ນໆທີ່ກ່ຽວຂ້ອງໃນຂະແໜງການທະນາຄານຂຶ້ນທີ່ສະໂມສອນໃຫຍ່, ສະຖາບັນການທະນາຄານ ໂດຍການໃຫ້ກຽດເປັນປະທານຂອງທ່ານ ຄຳວົງ ທິບພະວົງ ຮອງຜູ້ວ່າການ ທຫລ, ມີຄະນະພັກ, ຄະນະນຳ ພ້ອມດ້ວຍພະນັກງານຂອງ ທຫລ ເຂົ້າຮ່ວມ.

ໃນການເຜີຍແຜ່ຄັ້ງນີ້ເພື່ອເປັນການຈັດຕັ້ງຜັນຂະຫຍາຍວາລະແຫ່ງຊາດວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ, ເປັນການຍົກສູງການຄຸ້ມຄອງລາຍຈ່າຍງົບປະມານຂອງລັດດ້ວຍມາດຕະການປະຢັດມັດທະຍັດ, ຕ້ານການຟູມເຟືອຍ ແລະ ຈຳກັດລາຍຈ່າຍງົບປະມານທີ່ບໍ່ຈຳເປັນ ໂດຍນຳໃຊ້ຊັບສິນຂອງລັດໃຫ້ເກີດປະໂຫຍດສູງສຸດ. ໃນການຈັດຕັ້ງປະຕິບັດຕົວຈິງ ທຫລ ຈະດຳເນີນການຄຸ້ມຄອງລົດຂອງລັດກໍ່ຄືຂອງ ທຫລ ໃຫ້ມີຄວາມເປັນເອກະພາບລວມສູນ, ສະເໝີພາບ, ນຳໃຊ້ຖືກເປົ້າໝາຍ, ມີຄວາມໂປ່ງໃສ, ມີລະບຽບວິໄນ, ສາມາດກວດສອບໄດ້ ແລະ ສອດຄ່ອງກັບເງື່ອນໄຂຕົວຈິງ ໂດຍສະເພາະການຫຼຸດຈຳນວນລົດລົງ, ການຄຸ້ມຄອງລົດຂອງລັດທຸກຄັນທີ່ນຳໃຊ້ເຂົ້າໃນວຽກງານບໍລິຫານລວມ, ລົດຮັບໃຊ້ວຽກງານວິຊາສະເພາະ ແລະ ລົດວິຊາສະເພາະຈຳເພາະ ໃຫ້ຕິດແຜ່ນກາໝາຍການນຳໃຊ້ ໂດຍໃຫ້ລະບຸຊື່ຂອງອົງການທີ່ນຳໃຊ້ ພ້ອມທັງຂຽນວ່າ "ລົດຮັບໃຊ້ວຽກງານທາງລັດຖະການ" ແລະ ມີຄືວອາໂຄດຍົກເວັ້ນລົດປະຈຳຕຳແໜ່ງ, ການດຸ່ນດ່ຽງດັດສົມລົດປະຈຳຕຳແໜ່ງ, ດັດປັບການເບີກຈ່າຍນ້ຳມັນ, ການຫັນມາໃຊ້ລົດໄຟຟ້າໃຫ້ຫຼາຍຂຶ້ນ ແລະ ອື່ນໆ.




ໂອກາດນີ້, ທ່ານ ເພັດສະຖາພອນ ແກ້ວວົງວິຈິດ ຫົວໜ້າຫ້ອງການ ທຫລ ໄດ້ຂຶ້ນນຳສະເໜີກ່ຽວກັບຄຳແນະນຳການຈັດຕັ້ງປະຕິບັດດຳລັດ ວ່າດ້ວຍລົດຂອງລັດ ເລກທີ 599/ລບ ສະເພາະລົດປະຈຳຕຳແໜ່ງການນຳລະດັບສູງ ປະເພດ I ຫາ IV ເລກທີ 02/ຫສນຍ ລົງວັນທີ 30 ທັນວາ 2021 ພ້ອມທັງລາຍງານການຈັດຕັ້ງປະຕິບັດການຜັນຂະຫຍາຍດຳລັດດັ່ງກ່າວຢູ່ ທຫລ. ນອກຈາກນີ້, ທ່ານ ສາຍສະໝອນ ກິບເກສອນ ຮອງຫົວໜ້າຫ້ອງການ ທຫລ ກໍ່ໄດ້ຂຶ້ນນຳສະເໜີຄຳແນະນຳກ່ຽວກັບການຄຸ້ມຄອງ ແລະ ການນຳໃຊ້ລົດບໍລິຫານຂອງລັດ ເລກທີ 0393/ກງ, ລົງວັນທີ 04 ກຸມພາ 2022 ເພື່ອເປັນການສ້າງຄວາມຮັບຮູ້ ແລະ ຄວາມເຂົ້າໃຈກ່ຽວກັບດຳລັດດັ່ງກ່າວໃຫ້ດີຂຶ້ນ.




**#ຂ່າວ-ພາບ: ວັນປະເສີດ ສີມບູນຂັນ.**

# ເສດຖະກິດລາວຈະເຂັ້ມແຂງ ຖ້າປວງຊົນຮ່ວມແຮງນຳໃຊ້ເງິນກີບ